ສານປະຊາຊົນ
ແຂວງຫລວງພະບາງ
ຮັບ ເລກທີ 123
ວັນທີ 4.7.2016

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

==============

BBK

ແຂວງບໍ່ແກ້ວ

ບໍລິສັດບີບີເຄກົດໝາຍລາວຈຳກັດຜູ້ດຽວ

ເລກທີ່ 031 /ບຄ.ບກ

ລົງວັນທີ່ 4 (7) 2016

# ໃບສະເໜີ

- ຮຽນ: ທ່ານປະທານສານປະຊາຊົນແຂວງຫລວງພະບາງ ທີ່ເຄົາລົບແລະນັບຖືຢ່າງສູງ;
- ເລື່ອງ: ສະເໜີຂໍໃຫ້ທາງສານປະຊາຊົນແຂວງຫລວງພະບາງລົງກວດກາແລະອາຍັດຊັບອອກຊື່: ນາງ ບຸນທັນ ລັກປະສິດ ແລະ ທ້າວ ສຸກສະຫວັນ ລັກປະສິດ ເພື່ອເປັນຫລັກຊັບໃນການໃຊ້ແທນໜີ້ສິນຄືນໃຫ້ແກ່ໂຈດ.
- ອີງຕາມ: ສຳນວນຄະດີແພ່ງເລກທີ່ 17 /ຂຕ.ພ ລົງວັນທີ 11 ທັນວາ 2015
- ອີງຕາມ: ໃບແຕ່ງຕັ້ງແລະມອບສິດໃຫ້ທະນາຍຄວາມເລກທີ່ 28 /ບຄ.ບກ ລົງວັນທີ່ 22.6.2016

ຂ້າພະເຈົ້າຊື່ແລະນາມສະກຸນ ທ້າວ ບຸນທະວີ ຄໍລະຍົກ (ທະນາຍຄວາມແຫ່ງສປປລາວ) ມີໃບອະນຸຍາດວ່າຄວາມເລກທີ່ 46/ກຍ ລົງວັນທີ່ 09.05.2005 ຈາກລັດຖະມົນຕີວ່າການກະຊວງຍຸຕິທຳ, ປະທານບໍລິສັດ ບີບີເຄ ກົດໝາຍລາວ ຈຳກັດ ຜູ້ດຽວ, ທະບຽນວິສາຫະກິດເລກທີ່ 243/ຈທວ ລົງວັນທີ່ 05.02.2013, ມີສຳນັກງານຕັ້ງຢູ່ໜ່ວຍ 10 ບ້ານ ໃຫຍ່ຫ້ວຍຊາຍເໜືອ,ເມືອງ ຫ້ວຍຊາຍ, ແຂວງບໍ່ແກ້ວ;

ຂໍຖືເປັນກຽດຮຽນສະເໜີມາຍັງທ່ານປະທານສານປະຊາຊົນແຂວງຫລວງພະບາງ ເພື່ອຂໍສະເໜີໃຫ້ທາງສານປະຊາຊົນລົງກວດກາເລກບັນຊີເງິນຝາກຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສາຂາແຂວງຫລວງພະບາງ ແລະ ທີ່ດິນພ້ອມດ້ວຍເຮືອນ ແລະ ພາຫະນະຮັບໃຊ້ ເຊິ່ງຊັບສິນທັງໝົດນີ້ເປັນຂອງ ນາງ ບຸນທັນ ລັກປະເສີດ (ຈຳເລີຍ) ແລະ ທ້າວ ສຸກສະຫວັນ ລັກປະສິດ (ຜູ້ມີສ່ວນຮ່ວມໃນການຮັບເງິນ) ແລະເປັນຜູ້ມີສິດໃນກຳມະສິດໃນຊັບສິນຂອງຈຳເລີຍ.

ລາຍລະອຽດທີ່ສະເໜີຂໍໃຫ້ທ່ານລົງກວດກາແລະອອກຄຳສັ່ງອາຍັດຊັບມີດັ່ງນີ້:

1. ເລກບັນຊີເງິນຝາກຢູ່ທະນາຄານການຄ້າຕ່າງປະເທດ ຈຳນວນ 2 ບັນຊີຄື:

- ບັນຊີໝາຍເລກ 052 12 02 00949886001 ອອກຊື່ ນາງ ບຸນທັນ ລັກປະສິດ ຫລື ທ້າວ ສຸກສະຫວັນ ລັກປະສິດ
- ບັນຊີໝາຍເລກ 050 12 00 00 411 905001 ອອກຊື່ ທ້າວ ສຸກສະຫວັນ ລັກປະສິດ

ຜ່ານການກວດກາຕົວຈິງແລ້ວເຫັນວ່າ (ຈຳເລີຍ ແລະ ຜູ້ມີສ່ວນຮ່ວມຈຳເລີຍ) ທັງສອງຄົນໄດ້ມີການໂອນຍ້າຍເງິນຈາກບັນຊີ 050 12 02 0040421001 ແລະ ບັນຊີ 050 412 02 02343 ທີ່ທາງໂຈດໄດ້ໂອນເງິນໃຫ້ເພື່ອເປັນເງິນຊື້ທີ່ດິນຈາກນັ້ນໄດ້ມີການປ່ຽນໂອນເລກບັນຊີເປັນເງິນຈຳນວນ ຫລາຍລ້ານບາດ.

2. ທີ່ດິນແລະເຮືອນກໍ່ສອງຊັ້ນ ທີ່ຕັ້ງຢູ່ໜ່ວຍ 12 ເຮືອນເລກທີ່ 90 ບ້ານສັງຄະໂລກ, ເມືອງ ແລະ ແຂວງຫລວງພະບາງ, ເຊິ່ງທີ່ດິນດັ່ງກ່າວ ນາງ ບຸນທັນ ລັກປະເສີດ ໄດ້ຊື້ສິດນຳໃຊ້ ຈາກ ນາງ ເພັດສະໝອນ ມີສຸກ, ຕາມ.....................................................................................................................................................................ແລະນາງ ບຸນທັນກໍ່ໄດ້ຕັ້ງເຮືອນໃສ່ໃນຕອນດິນດັ່ງກ່າວ.

3. ລົດກະບະ, ຍີ່ຫໍ້ TOYOTA ຈຳນວນ 1 ຄັນສີ ຂາວ ໝາຍເລກທະບຽນ ຫລວງພະບາງ ກກ 3965

ເລກຈັກ 1KD 6990046 , ເລກຖັງ MROFZ 29 G 501645590, ອອກຊື່ ທ້າວ ສຸກສະຫວັນ ລັກປະສິດ

ເຊິ່ງຊັບສິນດັ່ງກ່າວຂ້າງເທິງນີ້ແມ່ນຈຳເລີຍໄດ້ມາຈາກເງິນຈຳນວນ 9,600,000 ບາດ ທີ່ຈຳເລີຍໄດ້ຂາຍດິນໃຫ້ແກ່ໂຈດແລະໄດ້ມີການຊື້ມາ

ພາຍຫລັງທີ່ໄດ້ເງິນຈຳນວນດັ່ງກ່າວແລ້ວ, ເພື່ອອາຍັດຊັບໄວ້ຈົນກວ່າການດຳເນີນຄະດີສິ້ນສຸດ.

4. ສຳລັບຄ່າໃຊ້ຈ່າຍໃນການລົງກວດກາ ແລະ ອອກຄຳສັ່ງອາຍັດຊັບໃນຄັ້ງນີ້ ຂ້າພະເຈົ້າຈະເປັນຜູ້ຮັບຜິດຊອບໃນການໃຊ້ຈ່າຍທັງໝົດ ແລະ ຕົວຈິງທີ່ທາງຄະນະກຳມະການໄດ້ຄິດໄລ່.

ດັ່ງນັ້ນ: ຈຶ່ງໄດ້ຂຽນໃບສະເໜີສະບັບນີ້ຮຽນມາຍັງທ່ານເພື່ອຊ່ວຍຄົ້ນຄວ້າພິຈາລະນາຕາມທາງທີ່ເຫັນວ່າສົມຄວນແລະຕາມກົດໝາຍ ດ້ວຍ;

ສະເໜີຮຽນມາຍັງທ່ານດ້ວຍຄວາມເຄົາລົບແລະນັບຖືຢ່າງສູງ

ທະນາຍຄວາມ

ບຸນທະວີ ຄໍລະຍົກ

**Bounthavy KHORAYOKE**

ບໍລິສັດ ບີບີເຄ ກົດໝາຍລາວຈຳກັດ ( BBK Lao Law Co., Ltd ) ສຳນັກງານຕັ້ງຢູ່ໜ່ວຍ10ບ້ານຫ້ວຍຊາຍເໜືອ,ເມືອງ ຫ້ວຍຊາຍ, ແຂວງບໍ່ແກ້ວ
ໂທ/ແຟກ: 084 212377, ມືຖື: 020 55770226, 23135271, E-Mail: khorayoke@yahoo.com, BBKlaolaw@mail.com